**ມະຫາວິທະຍາໄລຄາລິຟໍເນຍ, SAN FRANCISCO**

# ຂໍ້ກໍານົດສິດ

## ຂອງຜູ້ເຂົ້າຮ່ວມການທົດລອງ

ສິດຢູ່ລຸ່ມນີ້ແມ່ນສິດຂອງທຸກໆຄົນຜູ້ທີ່ຖືກຂໍໃຫ້ຢູ່ໃນການສຶກສາຄົ້ນຄວ້າ. ໃນຖານະເປັນຜູ້ເຂົ້າຮ່ວມໃນການທົດລອງ, ຂ້ອຍມີສິດດັ່ງຕໍ່ໄປນີ້:

1) ໄດ້ຮັບແຈ້ງບອກສິ່ງທີ່ການສຶກສາກໍາລັງພະຍາຍາມຊອກຫາ,
2) ໄດ້ຮັບແຈ້ງບອກສິ່ງທີ່ຈະເກີດຂຶ້ນກັບຂ້ອຍ ແລະ ຂັ້ນຕອນດໍາເນີນການ, ຢາ ຫຼື ອຸປະກອນໃດໜຶ່ງແຕກຕ່າງຈາກສິ່ງທີ່ຈະຖືກນໍາໃຊ້ຢູ່ໃນການປະຕິບັດທີ່ເປັນມາດຕະຖານ ຫຼື ບໍ່,
3) ໄດ້ຮັບແຈ້ງບອກກ່ຽວກັບຄວາມສ່ຽງ, ຜົນຂ້າງຄຽງ ຫຼື ຄວາມອຶດອັດຂອງສິ່ງຕ່າງໆທີ່ມີເລື້ອຍໆ ແລະ/ຫຼື ສໍາຄັນທີ່ຈະເກີດຂຶ້ນກັບຂ້ອຍສໍາລັບຈຸດປະສົງການຄົ້ນຄວ້າ,
4) ໄດ້ຮັບແຈ້ງບອກວ່າຂ້ອຍສາມາດຄາດຫວັງຜົນປະໂຫຍດໃດໜຶ່ງຈາກການເຂົ້າຮ່ວມບໍ່ ແລະ ຖ້າເປັນແນວນັ້ນ, ອາດຈະເປັນຜົນປະໂຫຍດອັນໃດ,
5) ໄດ້ຮັບແຈ້ງບອກຕົວເລືອກອື່ນທີ່ຂ້ອຍມີ ແລະ ພວກມັນຈະດີຂຶ້ນ ຫຼື ຂີ້ຮ້າຍລົງກວ່າການເຂົ້າຮ່ວມໃນການສຶກສາແນວໃດ,
6) ໄດ້ຮັບອະນຸຍາດໃຫ້ຖາມຄໍາຖາມກ່ຽວຂ້ອງກັບການສຶກສາທັງກ່ອນເຫັນດີເຂົ້າຮ່ວມ ແລະ ໃນລະຫວ່າງໄລຍະເວລາຂອງການສຶກສາ,
7) ໄດ້ຮັບແຈ້ງບອກວ່າມີການປິ່ນປົວປະເພດໃດຢູ່, ຖ້າຫາກເກີດມີອາການສົບໃດໜຶ່ງຂຶ້ນ,
8) ປະຕິເສດທີ່ຈະເຂົ້າຮ່ວມທັງໝົດ ຫຼື ປ່ຽນໃຈກ່ຽວກັບການເຂົ້າຮ່ວມຫຼັງຈາກການສຶກສາເລີ່ມຕົ້ນ. ການຕັດສິນໃຈນີ້ຈະບໍ່ມີຜົນກະທົບຕໍ່ກັບສິດຂອງຂ້ອຍເພື່ອຈະຮັບການເບິ່ງແຍງດູແລທີ່ຂ້ອຍຈະໄດ້ຮັບ, ຖ້າຂ້ອຍບໍ່ຢູ່ໃນການສຶກສາ,
9) ຮັບເອົາສໍາເນົາຂອງແບບຟອມຄໍາຍິນຍອມທີ່ລົງລາຍເຊັນ ແລະ ໃສ່ວັນທີແລ້ວ,
10) ບໍ່ໃຫ້ມີຄວາມກົດດັນເມື່ອພິຈາລະນາວ່າຂ້ອຍຈະເຫັນດີຢູ່ໃນການສຶກສາ ຫຼື ບໍ່.

ທ່ານໝໍສຶກສາຂອງຂ້ອຍຈະບອກຂ້ອຍວ່າການສຶກສາຄົ້ນຄວ້າຖືກຄຸ້ມຄອງໂດຍອົງການອາຫານ ແລະ ຢາ (Food and Drug Administration, FDA) ຫຼື ບໍ່. ຂ້ອຍເຂົ້າໃຈວ່າ, ຖ້າການສຶກສານີ້ຖືກຄຸ້ມຄອງໂດຍ FDA, ພາຍໃຕ້ກົດໝາຍອາຫານ, ຢາ ແລະ ເຄື່ອງສໍາອາງຂອງລັດຖະບານກາງ (Federal Food, Drug, and Cosmetic Act, FD&C Act), FDA ອາດຈະກວດກາ ແລະ ອັດສໍາເນົາທຸກບັນທຶກກ່ຽວຂ້ອງກັບການມີສ່ວນຮ່ວມຂອງຂ້ອຍຢູ່ໃນການສຶກສາ.

---

ຖ້າທ່ານມີຄໍາຖາມອື່ນ, ທ່ານຄວນຈະຖາມຜູ້ຄົ້ນຄວ້າ ຫຼື ຜູ້ຊ່ວຍຜູ້ຄົ້ນຄວ້າ. ນອກຈາກນັ້ນ, ທ່ານອາດຈະຕິດຕໍ່ຫາຄະນະກໍາມະການທົບທວນທາງດ້ານສະຖາບັນ (Institutional Review Board, IRB), ເຊິ່ງກ່ຽວຂ້ອງກັບການປົກປ້ອງບັນດາຜູ້ເຂົ້າຮ່ວມໃນການໂຄງການຄົ້ນຄວ້າ. ທ່ານອາດຈະເຂົ້າເຖິງຫ້ອງການ IRB ໄດ້ໂດຍການໂທຫາເບີ: (415) 476-1814 ຕັ້ງແຕ່ 8:00 ໂມງເຊົ້າ ຫາ 5:00 ໂມງແລງ, ວັນຈັນ ຫາ ວັນສຸກ ຫຼື ໂດຍການຂຽນໜັງສື ຫາ UCSF Human Research Protection Program, Box 1288, 490 Illinois Street, Floor 6, San Francisco, CA 94143 ຫຼື ໂດຍທາງອີເມວໄປທີ່ irb@ucsf.edu. ໂທ (415) 476-1814 ຫຼື ອີເມວຫາ irb@ucsf.edu ສໍາລັບຂໍ້ມູນກ່ຽວກັບການແປພາສາ.

ອົງປະກອບຂອງຄໍາຍິນຍອມແມ່ນໄດ້ນໍາສະເໜີໂດຍທາງປາກເປົ່າ.

ຊື່ຂອງຜູ້ເຂົ້າຮ່ວມ

ລາຍເຊັນສໍາລັບການຍິນຍອມຂອງຜູ້ເຂົ້າຮ່ວມ

ຜູ້ປົກຄອງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດຕາມກົດໝາຍ

ລາຍເຊັນຂອງພະຍານ

ວັນທີ